


Un roman lao de 1970, ses environnements et les ambiance de l'époque à un petit village du Laos.

ເຊົ້າມື້ນີ້ ມີຄົນຫຸ້ມໄປທີ່ກົກຂາມງອຍ ທາງຫາງບ້ານອີກແລ້ວ ຈານ
ພຸດທາ ຊຶ່ງຖືກປົດຈາກທະຫານ ເພາະເສັ້ຽຂາຫນ້ອຍນຶ່ງ ເກີດມີໃຈມານະ ຢາກຣານກົກຂາມ
ປລາດຄູ່ບ້ານກົກນັ້ນ ຄົງຈະຕັ້ງໃຈຈະເຮັດຂຽງ ໃຫ້ເມັຽ ໄປຂາຍໃນວຽງ....
ລາວອ້າງວ່າກົກຂາມກົກນີ້ ຢູ່ຕິດແດນນາລາວ ຕໍ່ຜີປ່າ ຊ້າ ລາວຈະຖືວ່າ ເປັນກັມສິດຂອງລາວ
ກໍຄົງບໍ່ຜິດປານໃດ ຄືວ່າ !

ກົກຂາມກົກນີ້ ຕາມເຖົ້າແກ່ພໍ່ແມ່ເລົ່າສູ່ຟັງວ່າ ມັນມີອາຍຸແກ່ກວ່າຫມູ່ບ້ານ ທີ່ຫາກໍມາ

ຕັ້ງນີ້ຊ້ຳ ພວກເພິ່ນມາຕັ້ງບ້ານ ຄັງເຫັນກົກຂາມມີຮູບປລາດ ເກີດຢູ່ເທິງໂພນນ້ອຍ ໆ ຈຶ່ງເອົາ ຄຳ ເອີ້ນກົກໄມ້ກົກນີ້ ມາເປັນຊື່ບ້ານ ວ່າ "ໂພນຂາມງອຍ"

ມັນເປັນກົກຂາມສົ້ມພໍດີ ຍາມຖອກໃບ ຄົນກໍເອົາໃບອ່ອນ ມັດຖີ້ມລົງຕົ້ມສົ້ມປາຄ່ ຍາມໜ່ວຍ

ກໍກິນສົ້ມໜ່ວຍມັນ ເປັນກົກໄມ້ຂອງບ້ານ ໃຜປາກເກັບ ປາກເອົາໃບ ເອົາໝາກ ມັນ ບໍ່ຕ້ອງຂໍກັນ ຖືວ່າລູກບ້ານ ໂພນຂາມງອຍທຸກຄົນ ເປັນເຈົ້າຂອງ.... ຍາມຫາມຜີໄປປ່າຊ້າ ແມ່ຍ່າແມ່ຍິງ ກໃດ້ອາໃສຮົ່ມ ຊື່ງເນີ້ງຍາວ ຂອງມັນເປັນທີ່ບັງແດດ. ພວກເດັກນ້ອຍ ມັກຂຶ້ນ ຫຼີ້ນ ຕົກເຈັບໄປກໍຫຼາຍຄົນ ເພາະກົກມັນເນີ້ງຂຶ້ນງ່າຍ ມີ ງ່າຫຼາຍ ຂາມກົກນີ້ ບໍ່ສູງພິລຶກ ສົມອາຍຸຂອງມັນ ເພາະລຳຕົ້ນ ຂອງມັນຫັກທົບຮາບ ໄປນຳແນວດິນ ຖ້າມັນບໍ່ຢູ່ເທິງໂພນ ສູງແດ່ ກົກຂອງມັນ ກໍອາດຈະແຮະ ພື້ນດິນໄປເລີຍ. ມັນເປັນກົກຂາມງອຍ ແລະບ້ານນີ້ ກໍມີຊື່ ວ່າ ບ້ານໂພນຂາມງອຍ ນຳມັນ.

ຈານພຸດທາ ກໍຮ່າວຄຶດອອກເຮັດ.... ແຕ່ໃຜກໍຫ້າມລາວບໍ່ຟັງ ຈົນເທົ່າວ່າ ບຸກຄົນສຳຄັນ ຜູ້ນຶ່ງມາຮອດ.

ຮ້ອງໂອ້ຍ ໆ ມາແຕ່ໄກ ວ່າ :

- ແມ່ນບັກໃດມັນຊິຟັນຂອງກູຫວາ ? ອ້າຍທິດມາກ ເວົ້າລາມປາມ ແບບ ຄົນ ເມົາອໍແອ້

ຕາຂອງລາວລຸກແດງເປັນຕາຢ້ານ ພວກເດັກນ້ອຍແຕກອື້ນ ຫຼີກທາງໃຫ້ລາວ ຜູ່ໝາຍໃຈຈະຟັນກົກຂາມ ກໍເຊົາຄ້າງ ເອົາດ້າມຂວານຄ້ຳຂີ້ແຮ້ ສັກຄະແຍ້ກ ໄປນັ່ງລົງ ຄູຄັນ ນາ ໝໍ່ ໆ ພວມນັ້ນແດດກໍບໍ່ທັນກ້າ ຕາເວັນຫາກໂດ່ງຂຶ້ນ ພໍຕໍ່ປາຍໄມ້ ທາງດົງແດງຟາກ ໜອງ.

- ມັນເປັນຂອງມຶງແຕ່ມື້ເທີງ ທິດມາກ ? ຈານພຸດທາ ຊຶ່ງຮຸ່ນຮາວຄາວດຽວກັນ ຖາມ

ອອກມາ ຢ່າງບໍ່ຕົກໃຈປານໃດ ແຕ່ຊິງມີຄວາມສົນໃຈ ໃນຄວາມປະສົງ ຂອງທິດມາກຫຼາຍ ກວ່າ ເພາະລາວໜີຈາກບ້ານ ໄປທະຫານ ເປັນດົນ ເປັນດີ ກັບມາເທື່ອນີ້ ກໍຄືຮູ້ສຶກວ່າ ແມ່ນ ຫຼັງ ໆ ມັນໄດ້ປ່ຽນ ໄປຫຼາຍ.

ທິດມາກ ຢືນຄຶງນຶງ ຢູ່ຕໍ່ໜ້າຄົນພິການຂາ ຮ່າງກາຍຂອງລາວ ຍັງບຶກບຶນລື້ມສັນ

ແມ່ນວ່າ ຜົມປາກມີເສັ້ນຂາວ ແຊມອອກມາແລ້ວ - ຫຼາຍຄົນວ່າທິດມາກຜົມຫງອກໄວ ຍ້ອນ ມີພຍາດ ແຕ່ບໍ່ມີໃຜຮູ້ວ່າ ພຍາດຫຼັງ ກໍເຫັນລາວ ແຂງແຮງດີ ບໍ່ເຈັບໄຂ້ໄດ້ປ່ວຍ ນຳໃຜຈັກ ເທື່ອ.

ທິດມາກແນມຫນ້າ ຈານພຸດທາຄາວນຶ່ງ ແລ້ວກໍມີຮອຍຍິ້ມ ສົມເພດ ຜາກົດຂຶ້ນໃນ
ສີຫນ້າ - ແລະແລ້ວທັງຜູ່ໃຫຍ່ ທັງເດັກນ້ອຍ ທີ່ຫຸ້ມມາເບິ່ງເຫັດການ ກໍຫັນໃຈໂລ່ງ ຫົວຍຸ້ມ ແຍ້ມໃສ່ກັນ ຢ່າງເຂົ້າໃຈ ເມື່ອທິດມາກ ນັ່ງລົງແປະລົງຂ້າງ ໆ ຈານພຸດທາ ແລະ ບອກສຽງທັມ ດາ ໆ ວ່າ :

- ຕັ້ງແຕ່ເດືອນຫ້າ ອອກໃຫມ່ສອງຄ່ຳ ປີກາຍນີ້

ເປັນອັນວ່າ ທິດມາກ ມາລາຍເກົ່າ ໃຜຢາກຟັງນິທານ ຊຶ່ງລາວເວົ້າຊ້ຳຊາກ ກໍຢູ່ຟັງ
ໃຜບໍ່ຢາກໄດ້ຍິນອີກ ກໍຫນີເມືອ - ຕາມເຄີຍ.

ຕໍ່ໄປນີ້ ແມ່ນເຫດການ ອັນເກີດຂຶ້ນ ຢູ່ບ້ານໂພນຂາມງອຍ ປາງນັ້ນ ດົນນານແລ້ວ...
ແຕ່ທິດມາກ ຝັງໃຈ ແຕ່ວ່າມັນແມ່ນປີກາຍນີ້....

ປີນັ້ນ ຂ່າວບ້ານໃດ ກໍບໍ່ຂົມຫົວລຸກ ທໍ່ຢູ່ບ້ານໂພນຂາມງອຍ... ເວົ້າ
ກັນ ຢູ່ເປັນປີ ກໍບໍ່ອີ່ມປາກ. ຂອງວ່າ ຢູ່ດີ ໆ ພໍ່ບ້ານໃຈພະ ກໍຖືກພວກຈັ່ງ ໄຮ ໄທປ່າຈັບໄປຂ້າ ຫາວ່າ ເພິ່ນເປັນໃຈຝ່າຍຣັຖບານ !

ໂປ້ວ ! ເກີນວ່າອັບປີເວົ້າ ເຮົາກໍຄົນມີບ້ານມີເມືອງ ເມືອງກໍມີເຈົ້າ
ມີນາຍ ບໍ່ເຂົ້າກັບພວກເພິ່ນ ຊິໄປເຂົ້າກັບຜີທາງໃດ ເຂົ້າກັບພວກເຂົານັ້ນ ຫວະ ?.... ເຂົ້າເທາະແມ້ ຊິໄດ້ກາຍເປັນກະບົດ ຂາຍຊາດໄປຊ້ຳ ຄືເຂົາເຮັດ ຢູ່ຖູ່ມື້ນີ້ແລ້ວ ຈັ່ງວ່າໄດ້ ລີ້ດອນຊອນປ່າຢູ່ ມີຄວາມສນຸກ ສຸກສບາຍ ມາແຕ່ໃສ ? ຫື ? ແລ້ວແມ່ນໃຜລະ ? ແມ່ນໃຜ ມັນຊິຢາກເຂົ້າ ເປັນຝ່າຍ ເຂົານະ - ຂໍຖາມແດ່ ?

ເຣື່ອງຍາພໍ່ບ້ານຖືກຂ້າ ຟັນເປັນຕ່ອນ ກິນຫົວໃຈພວກເຮົາ ລູກບ້ານ ຢູ່ເປັນເດືອນ ແຕ່

ພວມເອົາສົບເພິ່ນມາຈູດເຜົາ ລູກບ້ານກໍຮ້ອງໄຫ້ ຮົນໄຮນຳແຊວ ໆ ໃຜກໍຈົ່ມວ່າ : "ຄົນດີ ຕາຍ ຜູ່ຂີ້ຮ້າຍຍັງ"

ພວກໄທບ້ານເສົ້າໂສກອາດູນນຳ ຫົວໜ້າບ້ານ ບໍ່ຄະນານັບໄດ້ ສຸດເສົ້າສຸດສລົດ

ຂອງວ່າ ເຄີຍຢູ່ຊຸ່ມກຸ່ມເປັນ ນຳເພິ່ນມາຫຼາຍຟ້າຫຼາຍປີ ເພິ່ນພາເຮັດແຕ່ແນວຈົບ ໆ ດີ ໆ ພາ ລົງງານ ເຮັດຫົນທາງເຂົ້າບ້ານ ຈົນໂອໂຕແລ່ນໄດ້ ຂຸດຂຸມປາ ຢູ່ໜອງ ຕື່ມສິບກວ່າຂຸມ ໄວ້ລົງ ກິນບາດນ້ຳແຫ້ງ ເຮັດຕ້າຍວັດໃຫມ່ ກໍ່ສາລາໂຮງທັມ ວ່າແຕ່ເພິ່ນອອກປາກ ກໍມີຜູ່ພ້ອມໂຄບ ໆ ໂລດ ເຈົ້ານາຍທາງວຽງມາຊີ້ ໂອ້ຍໄດ້ຮັບຄຳຍ້ອງຍໍ ສໍຣະເສີນວ່າ ໂພນຂາມງອຍນີ້ນ່ະ ເປັນຫມູ່ບ້ານໂຕຢ່າງ ຂນາດຣັຖບານຕັ້ງງົບປະມານ ສ້າງຫມູ່ບ້ານພັທນາຂຶ້ນ ຍັງຕ້ອງສົ່ງນັກ ສຶກສາ ເຮັດສຖິຕິ ການຈັດຕັ້ງຂອງໂພນຂາມງອຍ ນຳພໍ່ບ້ານ - ປີກ່ອນນັ້ນ ຍາພໍ່ບ້ານເຮົາ ກໍຖືກເຊີນໄປ ຮັບຫຼຽນ ກາຄຳຊອບ ຢູ່ບຸນທາດຫຼວງ ເພິ່ນກໍຊັກຮູບ ຂຍາຍມານຳ ແຜ່ນບັກ ໃຫຍ່ ມາຫ້ອຍຝາເຮືອນ ຄ້າມພໍດີມາຕາຍ ມີສິ່ງສະການນັ້ນ ໃຜຫຼຽວເຫັນຮູບ ກໍອຸດໂທອຸດທັງ ພວກແມ່ຍິງໃຫ້ວ່າໄຫ້ຍ້ອຍ ໆ ໄຄ່ວ່ຄົນ ຜ່ອງກໍວ່າ : " ໂອ້ຍ ເຈົ້າເຮືອນ ຈັກວ່າສັງ ຫອນຈັ່ງໃດ ຈົນໄປຊັກຮູບໄວ້ - ເບິ່ງພຸ້ນນ່ະ ແນວວ່າຄົນຊາຕາຂາດແລ້ວ ເບິ່ງຕາລາວແມ້ ເສົ້າ - ເສົ້າ !" ຊ້ຳພັດວ່າ

ຊິວ່າຫຽັງ ແຕ່ໄທບ້ານ ຊຶ່ງຈົ່ງຮັກພັກດີ ນຳເພິ່ນນັ້ນ ອັນໂສກເສົ້າກໍດາຍ ທິດມາກ ຊຶ່ງ

ກິ່ນໂຄດຍາກວນບ້ານ ມາເປັນທໍ່ໃດປີ ຢ່າງບໍ່ເຄີຍຄ້ານເກງກໍປ່ຽນໄປ. ທິດມາກຜູ່ນີ້ ໃຫຍ່ລື່ນ ບ່າວເຄີງ ລູກຊາຍກົກຍາກວນບ້ານຕັ້ງ ໕ ປີ ແຕ່ຍ້ອນຮຽນຫນັງສືຊ້າ ນານໄດ້ເມັ່ງ ກໍເລີຍ ເປັນບ່າວຊາກັນ ນິສັຍບໍ່ເຂົ້າຊາຕາກັນ ແຕ່ປາງແຕກບ່າວ ເລີຍມາຮອດ ບວດແລ້ວ ຮຽນແລ້ວ ກໍຍັງຄືເກົ່າ ເຮັດຫຽັງກໍຢ້ານແຕ່ກັນລື່ນ ເສັ່ງຊ່ວງກັນ ອາຄາດກັນ - ພາຜູ່ສາວນ້ອງນຸ່ງ ໄປຕັດ ຟືນ ກໍຍາດຟືນກັນ ໄປຂຶ້ນກົກເຄັງ ກໍຍາດ່ງາເຄັງກັນ .... ຮອດທີ່ສຸດ ບັ້ນລົມສາວ ໄປມັກຜູ່ສາວດຽວກັນ !

ທິດມາກເສັ່ງປຽບ ເຣື່ອງຜູ່ສາວນີ້ລະ ໃຫ້ຍ່າວເຄີງ ເພາະບ່າວເຄີງ ຜູ່ຫນຸ່ມ

ກວ່າ ອິກທັງກິຣິຍາ ທ່າທາງກໍຈົບເຈືອ ສົມເປັນລູກຫົວຫນ້າບ້ານ ພໍ່ແມ່ອົບຮົມມາດີ ສ່ວນທິດ ມາກນັ້ນ ອາສັຍວ່າຫຼັກຖານ ຫນັກແຫນ້ນກວ່າຫມູ່ໄທບ້ານ ພໍ່ແມ່ກໍຄົນຂີ້ຕັກມັກໄດ້ ລູກກໍ ເປັນ ຄົນຖ່ອຍພາລ ມັກບັງບຽດ ຜູ່ທີ່ອ່ອນແອກວ່າ ຈົນຕິດເປັນສັນດານ .... ທິດມາກຊັງ ບ່າວເຄີງ ພໍປາກປ້ອຍແຊ່ງ ໃຫ້ບ່າວເຄີງ ກາຍເປັນຫີນ

ໄປແຕ່ດົນ ຄ່ອຍຊິໄດ້ສົມປາຖນາແດ່ - ເພາະເມື່ອໃດ ທີ່ບ່າວເຖິງ ຍັງເປັນຄົນໂຫ້ໂລ້ຢູ່ " ສາວ ບົວແດງ " ກໍຄົງ ບໍ່ມີສາຍຕາ ສຳລັບທິດມາກເລີຍລະ່.... ດີທໍ່ເປັນ ສາຍຍາດກັນໃກ້ ໆ ທິດມາກຈຶ່ງ ຄວາມເປັນພີ່ນ້ອງ ນັ້ນລະ່ ເປັນຂົວໄຕ່ ທຽວໄປມາຫາບົວແດງ ຈົນຫົວຂັ້ນໄດ ເກືອບຊິບໍ່ມີຍາມແຫ້ງ !

ແຕ່ປານນັ້ນ ຍາກວນບ່ານຕາຍ ທິດມາກກໍສະເທືອນໃຈ ບໍ່ແມ່ນຂອງຄອ່ຍ.... ເພິ່ນດີເກີນກວ່າທິດມາກ ຊິຖືເອົາຄວາມຣິສຍາ ບັງບຽດບ່າວເຖິງ ມາເປັນ ແນວຫຽໍ້ຫຽັນ ຄອບຄົວນີ້ຕື່ມ. ຜັດແຕ່ນັ້ນມາ ຈຶ່ງຜາກົດວ່າ ທິດມາກອວ່າຍ ປາກມາເປັນ ມິດກັບ ແມ່ແລະນ້ອງ ໆ ຂອງບ່າວເຖິງ ພໍສົມຄວນ.

ແຕ່ບ່າວເຖິງ ອົດຢູ່ບ້ານໂພນຂາມງອຍ ຕໍ່ໄປອີກບໍ່ໄດ້ ທັງທີ່ພວມນັ້ນ ເປັນຫມ່ອມຄາ ຜ້າເຫຼືອງ ບ້ອຍເຣັດຍຸນ ຕັກບາດ ເກັບດູກພໍ່ແລ້ວ ທິດເຖິງກໍຫາຍຫົວໄປ ປານຜີຍັກ ໃພກໍຄຶດ ວ່າ " ໂອ້ຍບັກຂີ້ສູດ ແມ່ກັນນ້ອງ ໄຫ້ນຳພໍ່ ຈົນໃຈຊິຂາດແລ້ວ ຊໍ້າຍັງມາ ໃຫ້ພວກຂາເຈົ້າ ຮໍ່າໄຮ ນຳມຶງຢູ່ນໍ້ ! "

ທິດມາກນັ້ນ ຄຶດຕຳນິຕິຕຽນ ຄູ່ອະຣິຫຼາຍຢູ່ ແຕ່ກໍລັກມີແຮງໃຈຍ່າວ ບາດນີ້ລະ່ ຊິບໍ່ ມີມານມາຜ່າ.... ເອີ້ ! ບົວແດງ !

ຫຼາຍຄົນເດົາວ່າ ບ່າວເຖິງ ຖືກພວກປ່າມາລັກເອົາໂຕໄປ.

ບໍ່ອືດແຕ່ ຜູ່ຊິວິຈານ ໄປຕ່າງ ໆ ນາ ໆ ພວກໄທບ້ານ ຕ່າງກໍຊ້ວານຊ່ວຍແມ່ຫມ້າຍ ພໍ່ບ້ານລູກຜູ່ຫຼ້າ ຫາກໍສອງຂວບ ຈຸໃຫ່ງກໍມີ ແຕ່ແມ່ຍ່າແມ່ຍິງ ນຳກັນ ເສັງຜົວແລ້ວ ຄຶດວ່າຈະ ໄດ້ ເພິ່ງລູກຊາຍກົກ ເປັນເຣື່ອເປັນແຮງ ກໍພໍດີ ໄປມິດຈ້ອຍ ບໍ່ຮູ້ວ່າ ເປັນຕາຍຮ້າຍດີ.

ທິດມາກມີແຮງໃຈຫຼາຍ ຄືນງາມຍາມແມ່ນ ກໍຂຶ້ນລົມສາວ ຜູ່ຊາຍຜ່າຍຫນີ ທິດມາກ ກໍຍອດນັກເລງ ໂປ່ຫມົດຫມູ່ບ້ານ ແຖວໂພນຂາມງອຍ ດົງແດງ ທົ່ງຊ້າງ ຄັນຂຶ້ນລົມ ສາວໃດ໋ ແລ້ວ ມີບ່າວບັກຫນ້າອື່ນໃດ ຊິກ້າມາເສັງ !

- ອ້າຍມາຫຼິ້ນນຳຊີ້ ກະບໍ່ວ່າຕ່ວາແດງ ? ທິດມາກຍັ່ງສຽງ

- ໂອ້ຍ ທິດມາກ ກະດາຍ ອ້າຍນ້ອງກັນ ຢາກມາກະມາ ຊິເວົ້າແນວອື່ນເທາະ.

ບົວແດງທັງເວົ້າທັງຫົວ ດ້ວຍໃຈຊື່ ແມ່ນວ່າ ທິດມາກພຽນ ເວົ້າລົມມາ ເປັນປີ ໆ ບົວ

ແດງ ຍັງຄຶດບໍ່ເຖິງ ດອກວ່າ ອັນທີ່ແທ້ແລ້ວ ທິດມາກຢາກໄດ້ບົວແດງ ເປັນເມັຽດອກ ບໍ່ແມ່ນ ຢາກຊິ ຕົບຫົວຫຼິ້ນ ແລ້ວເີ້ນອີ່ແດງ ໆ ຄືແຕ່ກ່ອນ ແມ່ນວ່າທິດມາກ ຊິອາຍຸລື່ນບົວແດງ ຕັ້ງ ສິບປີ ກໍບໍ່ເຫັນເປັນ ບັນຫາ ໃນເມື່ອ ທິດມາກ ກໍອ້າຍບ່າວ ສົດ ໆ ຜ່ານການບວດຮຽນ ມາ ແລ້ວ ຕາມປະເພນີ ເຊື້ອທາງທິດມາກ ກໍເປັນພີ່ - ແມ່ເຖົ້າບົວແດງ ນັ້ນເປັນນ້ອງສາວ ຂອງແມ່ ເຖົ້າທິດມາກ ຄັນເອົາກັນ ກະຊິຜິດຜີໂຕໃດ໋.... ແຕ່ບົວແດງ ກໍທຳທ່າ ບໍ່ຮູ້ວ່າ ອ້າຍມັກໂຕ ແມ່ນ ດີ ມີເຣື່ອງຫຽັງ ກ່ຽວກັບບ່າວເຖິງ ກໍແມ່ນເອົາມາປຶກສາ ອ້າຍຊ້ຳ ຄອບຢາກດຶງເຂົ້າຫາກັນ ໃຫ້ຖືກກັນ ຕາມພາສາ ແມ່ຍິງບໍ່ມັກ ໃຫ້ຄົນໃກ້ກັນ ອາຄາດແຄ້ນ ຍ້ອນແນວຕາຍ ໆ ຖືທິດຖືມານະ ຝັງໃຈ ແຕ່ຄາວຍັງເຍົາວັຍພຸ້ນ !

ຈົນບາດນີ້ ບ່າວເຖິງຫນີໄປແລ້ວ ທ່າທີສາວບົວແດງ ກໍຍັງຊື່ ໆ ຢູ່ - ຊິໃຈຫນັກແທນ້ນ

ພໍປານໃດ໋ເດ້ ທຽວລົມຄູ່ຄືນ ມັນຊິມົ້ມ ພໍ່ແອບໍ່ ? ທິດມາກເຂົ້າຂ້າງໂຕເອງໄວ້.

- ອ້າຍທິດໂຕໄປ ມັນກະສິ່ງຂ່າວ ຫວາລ່ະ ແດງ ? ບ່າວຜູ່ອ້າຍ ຖາມດຽງ ໆ ເບິ່ງ ຊອມ

ຫາຫົນທາງ ປະຈານຄວາມບໍ່ດີ ຂອງຄູ່ແຂ່ງຈັກຫນ່ອຍ ຊິໄດ້ຖື ເປັນຄວາມຜິດຂອງມັນ ວ່າບໍ່ ເປັນ ລູກຜູ່ຊາຍຕົວະ ໃຫ້ສາວຖ້າມາເປັນປີ ຈົນໄທບ້ານຊ່າ ວ່າບ່າວເຖິງ ບວດ ແລ້ວກໍຄົງບຽດ. ມັນມາໂຕນຫນີ ບໍ່ຮູ້ຕົ້ນປາຍສາຍເຫດ ແບບນີ້ ກະ ແມ່ນຊົ່ວ ບໍ່ສົມກັບບົວແດງ ຊິເຊື່ອ ມັນອີກຕໍ່ໄປຕີ້....
ທິດມາກ ຄຶດແລ້ວ ກໍພໍໃຈ ໃນແຜນການ ຂັ້ນທຳອິດຂອງຕົນ.

ແຕ່ແລ້ວ ຄຳຕອບຂອງບົວແດງ ນາງກໍເຮັດເອົາ ທິດສເດີດ....

- ສັ່ງລະບໍ ອ້າຍທິດ ສິກຢູ່ວັດແລ້ວ ລາວມາແວ່ຂ້ອຍກ່ອນຈັ່ໄປ " ບົວແດງເວົ້າຊືມ ໆ.

- ເຈົ້າຢ່າໄປເວົ້າທາງໃດເນີ ອ້າຍທິດ ລາວບອກໃຫ້ອຳໄວ້ກ່ອນ !

ທິດມາກໃຈເຕັ້ນ ສູນກໍສູນ ຢາກຮູ້ກໍຢາກຮູ້ ປລາດໃຈ ສົນໃຈ ແລ້ວທັງເສັຽໃຈ

- ມັນສັ່ງວ່າແນວໃດ ? ທິດມາກສວຍໂອກາດ ຕ໊ອດກົ້ນເຂົ້າ.

- ວ່າລາວຊິໄປແກ້ແຄ້ນ ແທນພໍ່ລາວ ແລ້ວຈັ່ງຊິກັບມາເອົາຂ້ອຍ ຊັ້ນລະຕີ.

- ວ່າໃຫ້ຂ້ອຍອົດສາຖ້າວ່າຊັ້ນ - ທໍ່ໃດປີກະໃຫ້ຖ້າ" ສຽງຂອງອີ່ສາວ ໃຈເດັດ ຫນັກ

ແຫນ້ນ ແຈ່ມແຈ້ງບໍ່ມີສັ່ນເຝືອນ.

ບາ ບັກເຖິງ ! ບັກຈັງໄຮໄຟໄຫມ້ ! ມຶງຊິໄປຕາຍທາງໃດ ກູຍັງມາຜູກ

ມັດ ຫົວໃຈເຂົາໄວ້ຢູ່ ມຶງຄືສິ ປາກວິເສດແທ້ ບັກເຜດ. ບາດກູນ່າ ຫຼັງຄາ ເຮືອນ ເກືອບຈຸກັນ ມຶງມາຂື້ນລົມ ເກືອບທຸກຄືນ ກູຍັງເຄີຍແຄ້ນໃຈ ພໍ ຢາກຂ້າມຶງຖິ້ມ ເຫັນມຶງໂດດຫນີ ໄປປານຄົນໂທດ ກູກໍສວ່າງທາດ ວ່າຊິເຫມີດມານ ຊິໄດ໋ ເດ້ ! ເສືອກມາສັ່ງເສັງກັນ ໃຫ້ຄໍາສັນຍາ.... ອີ່ຜູ້ຍິງ ຫນ້າໂງ່ກໍເຊື່ອ ! " ທິດມາກສູບຢູ່ພິບ ໆ.

ອົດກັ້ນ ໂທສະຈິດ ເອົາໄວ້ພໍຢູ່ ແມ່ນຈັ່ງໄດ໋ ທິດມາກ ໂຫດຮ້າຍ ຕຸບຕັບ ກັບຄົນທັງ

ຄ້າຍ ແຕ່ຕໍ່ຫນ້າແມ່ຍິງ ທີ່ຕົນປັກໃຈຫມາຍແລ້ວ ທິດມາກກໍປ່ຽນຄື ເສືອທີ່ລ້ຽງ ໃຫ້ຄຸ້ນແລ້ວ ນີ້ລະ ຍອດຫົດເລັບ ຫົດຄົມ ເປັນຜູ່ຈົບຜູ່ດີ ປາກຈາ ກໍມີ ນໍ້ານວນຊວນຟັງ ພໍແລ້ວຢູ່.

-ເຮັດໄດ໋ ໂຕຊິຖ້າມັນໄຫວລ່ະ ແດງ ຫາມັນຖືກຈັບ ຖືກຂ້າໄປແລ້ວເດ້ ຊິບໍ່ຄ້າງຮ້ານ

ເຮັດເຕົ່າເປົ່າຢູ່ບໍ່ແລ້ວ ? ແສເວົ້າ ເປັນຄວາມປອກໄປສາ

ບົວແດງຫົວສຽງຂົມ ໆ ໃນຮູຄໍ.

- ຄ້າງກະຄ້າງ ແຫຼະອ້າຍທິດ ບໍ່ໄດ້ກັນຊາດນີ້ ຍັງຊາດຫນ້າເດ້ !

ຟັງ ! ໃຈມັນເດັດຂາດຂນາດໃດ໋ !

ທິດມາກ ໂຈະຄວາມລົມໄວ້ຫັ້ນກ່ອນ ມື້ໃຫມ່ກໍທຽວ ໄປມາຫາສູ່ ຄຶດວ່າ

ຄວາມ ພະຍາຍາມຢູ່ໃສ ຄວາມສຳເຣັດຕ້ອງຢູ່ຫັ້ນ ຍັງຄຶດຕໍ່ໄປອີກວ່າ ບົວແດງຊິ ທົນຖ້າ ຕໍ່ໄປດົນປານໃດ ແນວວ່າຂ່າວຄາວທິດເຖິງ ຮອດບໍ່ມີມາ. ການທີ່ ລູກຊາຍກວນບ້ານ ເກົ່າ ຫາຍສາບສູນ ໄປຈັ່ງຊັ້ນ ທາງການກໍສືບສວນຢູ່ ເພື່ອໃຫ້ຮູ້ຂໍ້ເທັດຈິງ ວ່າບຸກຄົນຜູ່ເສັງ ໄປ ນີ້ ໄປກະທຳຜິດ ສົມຄົບກັບພວກສັຕຣູບໍ ຫຼື ວ່າໄປທຳ ຄວາມດີ ຄວາມຊອບອັນໃດ.

ແຕ່ຕາມໃຈທິດມາກແລ້ວ ມັນຊິໄປແກ້ແຄ້ນ ຜີຫ່າກັນແນວໃດ ກະຕາມ ຄັນມັນໂຕນ ໄປຫາທາງເຂົາ ກໍແປວ່າ ມັນເປັນກະບົດຊາດ ທາງການຄົງ ຈະປະກາດ ຈັບໂຕມັນ ໃນບໍ່ດົນນີ້ ລ່ະ !

ເວລາກາຍໄປອີກຫຼາຍເດືອນ ສຸດທີ່ ທິດມາກນຳບົວແດງ ບໍ່ລະສາຍຕາ ບໍ່ມີທ່າວ່າ ທິດເຖິງຊິຂ່າວມາຮອດສາວຊູ້ - ຈິນວ່າ .... ກ່ອນຍາມນາ ຫນ້ອຍນຶ່ງ ສາວໄຂ ແມ່ຂອງບົວ ແດງ ເກີດໄປມັກມານທານຮ້າຍ ກັບຄົນໄທຕ່າງຜູ່ນຶ່ງ ຊຶ່ງມາເລາະຂາຍປາຫຼວງ ປາຈີນ ມາລີ້ງ ແກວ່ນໂພນຂາມງອຍຫຼາຍເດືອນ. ນາຍສຸພັນ ອາຍຸຊາກັນກັບສາວໄຂ ສົມນ້ຳສົມຕ່ອນ ຍິງຫມ້າຍໄວສາວໃຫ່ງ ກາງຊ ໄດ້ເຂີຍໄວ ພໍມາຄ້ຳເຮືອນ ຄັນບໍ່ໄດ້ ລາວກໍເລີຍເອົາເອງສາ ສູ່ເຂົ້າ ສູ່ຂວັນ ກັນດີບດີ ພໍສາມເຖົ້າສີ່ແກ່ ຕາມປະເພນີ.

ພໍ່ໃຫມ່ຂອງບົວແດງ ຫາເງິນພໍໄດ້ກິນ ຮັກສາອາຊີບເດີມ ຂອງລາວນັ້ນລະ ເພາະລາວ ວ່າ ບໍ່ເຄີຍເຮັດນາ ພວມນ້ຳພໍດຳຂ້ງວ ໆ ລາວກໍອອກເງິນ ຈ້າງໄທບ້ານລົງຊ່ອຍ ທິດມາກກໄປ ໄຖ-ຄາດໃຫ້ ບົວແດງ ກັບແມ່ເປັນຜູ່ດຳ ປີນີ້ເຮືອນບົວແດງ ຊິງຈະມີເຂົ້າເຫຼືອກິນຢູ່ແດ່ ໄທບ້ານ ທັງຫຼາຍ ຕ່າງກໍຊອມເບິ່ງ ຄວາມສຳພັນ ຂອງບ່າວພີ່ສາວນ້ອງ ໂຈດຂານກັນວ່າ ອອກພັນ ສານີ້ ແມ່ນາຍມາກ ຄົງຈະຂໍ ບົວແດງໃຫ້ລູກຊາຍ ເຮັດດອງໃຫ່ງ ກິນກັນ ສາມມື້ສາມຄືນ ພຸ້ນແຫຼະ ຈັ່ງຊິສົມຄວາມຮັ່ງມີ ຝ່າຍຊາຍ ແລະ ສົມກັບທີ່ ທິດມາກ ຫມາຍປອງ ດອກໄມ້ງາມ ດອກນີ້ມາດົນ !

ແລ້ວດຳນາ ບົວແດງຫ້າງຕ່ຳແພ ຕ່ຳຜ້າຝາຫຼາຍສິບວາ ຈົນຄົນຊຳ. ທິດມາກກໍອິດຕື່ນ ໃຈບໍ່ໄດ້ ຄຶດວ່າບຸນເຂົ້າປະດັບດິນ ແລ້ວນີ້ ຊິຟ້າວຂໍ ເພື່ອບົວແດງຫຍິບເສື່ອທັນ !

ແຕ່ແລ້ວ ວັນນຶ່ງ ເຫດການ ອັນທິດມາກ ແສນຊິເຈັບປວດກໍ ເກີດ

ຂຶ້ນ

ແລງນັ້ນ ທິດມາກ ຈອບນຳຫຼັງບົວແດງໄປ ຄືເຄີຍເຮັດ ຂອງວ່າ ຫາທາງແຕ່ຊິເຂົ້າລົມ ບໍ່

ວ່າເຊົ້າ ແລງ ຄ່ຳ - ນີ້ບົວແດງຫາບຄຸໄປຫນອງ ເພື່ອຫົດສວນຖົ່ວ ຄ່ຳ ໆ ໃຈຊິ່ວຊຶ່ມ ບອກອີກວ່າ ຄັນພໍຊຸນໄດ້ ກໍປາກຊຸນ ບົວແດງ ນາງເປັນຕາຮັກ ເປັນຕາຊຸນ ໄປທຸກບ່ອນ ແຍງມາ ຈົນເອີກຊິ ແຕກຕາຍແລ້ວ !

ຄ້າງຖົ່ວດໍ ພໍດີພອມໃບຕືບ ດອກຫຼຸດກີບ ອອກຝັກພໍຈູມຈໍ ເດືອນສິບນີ້ ບົວແດງຄົງ

ເກັບບໍ່ຫວາດບໍ່ໄຫວ ທິດມາກຄືດວ່າ ຄັນບົວແດງເມືອຂາຍຖົ່ວວຽງ ຊິຂໄປນຳ ຫາຊື້ເອົາ ຂອງ ເຄື່ອງໃຊ້ສຳລັບດອງ ຊ ື້ຄຳຈັກສອງບາດຝາກໄວ້ ເງິນບໍ່ພໍ ກໍຂໍແມ່ ໆ ຄົງບໍ່ຂືນພໍຄວາມ ຖ້າແມ່ນ ເພື່ອລູກໄພ້ຜູ້ນີ້ !

ຄາວນຶ່ງປ່າໄມ້ທາງແຄມຮົ້ວຕິດດົງ ດັງຄວາກຄາກຂຶ້ນ ທິດມາກຕື່ນ ຄັນ ແມ່ນຫມູປ່າມາລວນ ທິດມາກກໍຈະສແດງລວດລາຍ ພະເອກໃຫ້ບົວແດງ ໄດ້ເຫັນໃຈ ຍ້ອນບາດນີ້ລ່ະ....

ແຕ່ບໍ່ແມ່ນ....

ບໍ່ແມ່ນຫມູປ່າ....

ແມ່ນຄົນ !

- ບັກເຖິງ !

ບໍ່ - ທິດມາກບໍ່ໄດ້ຮ້ອງອອກໄປດອກ ລາວຈອບມິດຢູ່ປານຕາຍ ເຫັນຄູ່ອະຣິມາ ຈັງ ຫນ້າຂນາດ ນີ້ແລ້ວ ທິດມາກຊ້ຳ ຄິດຖອຍຫຼັງ ປາກຈອບເບິ່ງວ່າ ມັນຊິເຮັດຫຍັງກັນດີກວ່າ ຊູ້ ເກົ່າ ສາວແກ່ເຂົາ ບົວແດງ ກໍມັກເປັນທຸນຢູ່ແລ້ວ ຄັນແມ່ນ ມັນຊິຮ້າຍແຮງຂນາດ ຈຶ່ງຈະເຂົ້າສູ້ ຊີງເອົາ ທິດມາກກະໂດງການ

- ບົວແດງ " ສຽງບ່າວເຖິງຮ້ອງໃສ່ຊູ້

24 / VII
ຫ້າມຈຳໜ່າຍ

ສາວງາມງວກໄປນຳສຽງ ວາງຄຸນ້ຳຄວ້ຳລ່າງງ່າງ ແຕ່ປາກມິດ ບໍ່ມີສຽງ

ຂານ ແສງຕາທີ່ນັ້ນ ທີ່ລຸກວາບ ມີຄວາມຕື່ນໃຈ ສົນໃຈ ບ່າວເຖິງ ແລ່ນເຂົ້າ ມາຄື ຊ ິໂຈມກອດເອົາຊູ້ ແຕ່ແລ້ວ ກໍຈັ້ງໂຕໄວ້ ຈັບແຕ່ມືບົວແດງ ຈູງແວ່ໄປ ທາງຂອກເຮົ້າ ບັງພຸ່ມໄມ້.

ຜູ່ຈອບເບິ່ງ ກໍນຳຈອບເຂົ້າໄປ ບໍ່ລະສາຍຕາ.

- ອ້າຍຕັ້ງສ່ຽງມາຫາແດງ" ບ່າວເຖິງວ່າທັງຫອບທັງເສົ່າ

-ແລ້ວຫນີ້ ອ້າຍເຖິງໄດ້ກິນແລງມາແລ້ວຫວະ ຂ້ອຍຊິໄປຫາ ແນວມາໃຫ້ປັ້ນນໍ້ ?

- ບໍ່ຕ້ອງດອກແດງ ອ້າຍບໍ່ຢາກກິນຫຽັງທັງນັ້ນ ຂໍມາເຫັນຫນ້າແດງກໍພໍ.

ທັງສອງ ແນມຕາກັນບ່ວາງ ເບິ່ງກັບເບິ່ງ ຄືຈັ່ງຊິຊອກຫາ ຄວາມປ່ຽນແປງ ຂອງສິ່ງໃດ

ສິ່ງນຶ່ງ ແຕ່ກໍບໍ່ມີ ບົວແດງ ກໍຍັງເປັນບົວແດງ ຜູ່ຊື່ ບໍຣິສຸດ ຮັກດຽວໃຈດຽວ ແລະ ບ່າວເຖິງ ກໍ ຍັງຄົງຝັງໃຈແຫນ້ນກັບສາວຊູ້ ຢ່າງບໍ່ມີຫຼູດລາ.

- ແດງຄຶດຮອດອ້າຍແດ່ບໍ່ - ມັນຈັກເດືອນແລ້ວຫນີ້ ທີ່ອ້າຍຫນີໄປ ອີ່ແມ່ອ້າຍເປັນ

ແນວໃດ ແດງກະໄດ້ໄປມາຫາສູ່ລາວບໍ່ ຫືື ?

- ກະໄປ ໄປອອຍເພິ່ນຢູ່ເລື້ອຍ ໄດ້ຫຽັງກະສິ່ງຍື່ນບໍ່ຂາດ

- ແດງເອີ້ຍ ເຈົ້າມາດີນຳອ້າຍແທ້ ບໍ່ທັນໄດ້ກັນ ເຈົ້າກະເຮັດ ນຳແມ່ອ້າຍປານແມ່ນພໍ່

ແມ່ນແມ່.

- ບໍ່ເປັນຊັ້ນດອກ ອ້າຍເຖິງ ຂ້ອຍກະຄືລົມກັບເຈົ້າ ໄວ້ຫັ້ນລະ ເຮົາສັນຍາກັນແລ້ວ

ປານຜົວເມັງກັນ ກະວ່າແມ່ນ ແສນວ່າກາຍເຮົາຊິຕ້ອງຢູ່ຫ່າງກັນ ໃຈເຮົາກະມັດ ຕິດກັນໄວ້ ແລ້ວເດ້ ອ້າຍ. ແມ່ອ້າຍເຖິງ ກະຄືແມ່ຂ້ອຍນຳ ພວກເດັກນ້ອຍ ເຂົາກໍຮັກເອົາຂ້ອຍ ເປັນເອື້ອຍຊູ່ ຄົນ. ອ້າຍເຖິງບໍ່ຕ້ອງເປັນຫ່ວງ ທາງເຮືອນເຈົ້າເດີ້

ວ່າແຕ່ອ້າຍເທາະ ໄປທຸກຍາກລຳບາກ ຈັ່ງໃດ໋ ບໍ່ບອກໃຫ້ແດ່ຫວາ ໃຜກະເປັນຫ່ວງ !

- ອ້າຍບໍ່ທຸກ ບໍ່ບາກປານໃດດອກ ແດງ ອ້າຍໄດ້ຮັບໜ້າທີ່ສຳຄັນ ແຕ່ເວລານີ້ ອ້າຍຈຳ

ເປັນຕ້ອງລີ້ຊ່ອນ ຢູ່ສາກ່ອນ ເພື່ອຊິສືບໃຫ້ຮູ້ ໂຕການໜອນບ່ອນໃສ້ ຄົນໄທເຮົານີ້ ຈັ່ງໃດລ່ະ ໄທບ້ານ ເຮົານີ້ລ່ະ ເປັນໃຈ ໃຫ້ເຂົາມາເອົາອີ່ພໍ່ໄປຂ້າ ມັນຂາຍຊາດ !

ບ່າວເຖິງ ເວົ້າແຮງຂື້ນ ຕາມອາຣົມແຄ້ນ ທິດມາກຜູ້ລີ້ຟັງ ກໍຈົບຕົກໃຈ ຕື່ນຄຶດປ້ານ

ບ່າວເຖິງສົງໃສໂຕ ກໍປານນັ້ນ ແຕ່ແລ້ວກໍປົງຕົກວ່າ ຄັນຊາດມັນເກັ່ງແທ້ ມັນຕ້ອງສືບໄດ້ ໂຕຜູ່ ທໍຣະຍົດ ຄຶດໂກງອີ່ຫຼືພຸ້ນ ເຮົາບໍຣິສຸດ ແທ້ແລ້ວກະບໍ່ຕ້ອງຢ້ານ ແລ້ວທິດມາກ ກໍຈອບຟັງ ຈອບເບິ່ງຕໍ່ໄປ.

ບົວແດງສ້ອນຄວາມວ່າ :

- ອ້າຍເຖິງ ໄປຢູ່ແຕ່ໃນປ່າ ລີ້ຊ່ອນຢູ່ ເຮັດຈັ່ງໃດຊິຮູ້ວ່າ ໄທບ້ານເຮົາຜູ່ໃດ ເຂົ້າເປັນໃຈ

ທາງເຂົາ ?

- ກະຊັ້ນແລ້ວແດງ ໄປຢູ່ປ່າຫັ້ນລ່ະ ເພື່ອຊິຮູ້ໂຕການມັນ ເພາະມັນເຮັດວຽກໃຫ້ເຂົາ

ມັນກະຕ້ອງອອກໄປສົ່ງຂ່າວເຂົາແດ່ ແຫ່ງເຈົ້ານາຍທາງເຮົາ ອອກມາຖາມທຸກສຸກ ພີ່ປ້ານ້າສາວ ດຸ ຈັ່ງຊີ້ ຄົນຈັງໄຮ ມັນກໍຕ້ອງອອກໄປ ຣາຍງານເລື້ອຍຊັ້ນລະບໍ ເພື່ອເອົາສິນຈ້າງ ລາງວັນເດ໋.

- ອ້າຍເຖິງ ໄປຢູ່ໃກແທ້ຫວານີ້ ?

- ບໍ່ ອ້ອມແອ້ມບ້ານເຮົາແດ່ ຟາກດົງພຸ້ນ ກັບຂ້າມພູໜີ້ທີ່ນັ້ນແລ້ວ ເລາະຢູ່ບໍ່ເຊົາ.

- ແລ້ວກະບໍ່ມາໃກ້ມາກາຍເຂົາ" ສາວຕໍ່ວ່າຊົງນ້ອຍໃຈ

- ຣີ ! ເຂົາມາເລື້ອຍ ມາຈອບຢູ່ຫນີ້ ເກືອບຄູ່ມື້ ໂຕຫາກບໍ່ຮູ້"

- ຫີ ! ຄົນຊອກກໍາໄຮ ມາຈອບເບິ່ງເຂົາ ! ບົວແດງທຸບແຂນຊາຍຊູ້ ຢ່າງແສນງອນ.

ແລ້ວບ່າວເຖິງ ກໍລຸກລາຈາກໄປ.ຂະເຈົ້າບໍ່ໄດ້ປະພຶດສິ່ງໃດເສັຽຫາຍ ແລະ ຂັດຕໍ່ຣະບຽບ ປະເພນີ ທິດມາກຍັງງຶດໃຈ ບັກຄູ່ອາຄາດ ວ່າມັນບໍ່ເຫັນອອດອອຍ ເອົາກຳໄຣ ຈາກຊີ້ນຫນັງ ເປັນຕາກິນຫັ້ນແດ່ ພໍເປັນກຳລັງໃຈໃນການພັດພາກ ແຕ່ແລ້ວ ທິດມາກກໍຄຶດໂອ້ວ່າ ບ່າວເຖິງກໍຄົງຈະ ຮັກບົວແດງຢ່າງທ່ຽງແທ້ນັ້ນລ່ະ ຈຶ່ງບໍ່ຄຶດລູ່ລ່າ ຜ່າເປັຽ ຫຼີ້ນ ແຕ່ລາວເອງກໍທ້ອນ ຄຶດຊິ່ວ ໆ ໄປຄາວນຶ່ງ ແຕ່ເລີກລົງໄປ ທິດມາກກໍ ບູຊາບົວແດງ ໄວ້ທີ່ສູງ, ຍິງສາວກໍປຽບຄືດອກໄມ້ ຖ້າຮັກ ຖ້າແພງ ກໍຄວນ ຖນອມ ເພາະເມື່ອໃດ ຖືກມືເກົ່າແລ້ວ ກໍມີແຕ່ຈະໄຮ້ຄ່າ ຫຼຸດຣາຄາ...

ຕໍ່ແຕ່ມື້ໄດ້ພໍ້ ກັບບ່າວເຖິງເປັນທາງລັບ ບົວແດງກໍມີທ່າທີ ກິດກັນທິດມາກຂື້ນມາ. ແຮກກໍ່ ກົບອກອ້າຍເມືອ ບໍ່ໃຫ້ຢູ່ລົມ ອ້າງວ່າບໍ່ສະບາຍ ແຕ່ທີ່ແທ້ແລ້ວ ໃຈປະສົງ ຢາກຟ້າວ ເຂົ້າສ້ວມນອນ ກອດຜ້າຟາ ຝັນຫາຊາຍ ໃນດວງໃຈ ຕ່າງຫາກ.

ຕັ້ງແຕ່ແມ່ເອົາພົວມາ ບົວແດງຕ້ອງແຍກຫ້ອງມານອນ ຢູ່ສ້ວມນ້ອຍ ໆ ບ່ອນເຊັຽຕໍ່ ເຮືອນຄົວ ຝາປະຕູ ຈະອັດກະຣອດບໍ່ມີ ບົວແດງບໍ່ມີເວລາ ລົມກັບແມ່ຫຼາຍ ຄັນດົນ ໆ ຫຼືມື້ໃດ ລົມ ຝົນ ສາດປຽກຫ້ອງ ບົວແດງ ຈຶ່ງຄຶດພໍ້ ຜາຣົບ ເຣື່ອງຝາປະຕູສ້ວມນຳແມ່.

ພີ່ນ້ອງ ລາງຄົນມັກເວົ້າສຽດບົວແດງວ່າ :

- ອີ່ແດງ ເອີ້ຍ ແມ່ມຶງຫັ້ນ ຈັ່ງແມ່ນເມົາ...ນໍ້"

ບົວແດງບໍ່ເຂົ້າໃຈຄັກ ແຕ່ກໍຄຽດຕາງແມ່ພໍສົມຄວນ ຫາກແມ່ບໍ່ຊົງຈະສົນໃຈ ເຣື່ອງ ປາກ ໄທ ບ້ານປານໃດ ແມ່ທຽວເຂົ້າວຽງນຳພົວເພິ່ນດຸ ນຸ່ງສິ້ນເສື້ອແນວຕ່າງຕາ ບົວແດງສັງ ເກດເຫັນວ່າ ແມ່ມີຣອດແນວທາປາກ ທາແກ້ມປານສາວນ້ອຍໄທໃນເມືອງ.

ເດືອນເກົ້າດັບ ທິດມາກມາຂໍ ບົວແດງປະຕິເສດ ! ການມາຫຼອນປາມ ຂອງບ່າວເຖິງເທື່ອນັ້ນ ສ້າງຄວາມຫວັງ ໃຫ້ແກ່ສາວງາມ ຫຼວງຫຼາຍພາຍມາກ ບໍ່ຕໍ່ແຕ່ທິດມາກ ຈະທຽວວອນອີກ

ຈົນເທົ່າອອກພັນສາ ບົວແດງກໍຖືທາງ ປະຕິເສດ ບໍ່ຕົກລົງປົງໃຈ !

ທິດມາກວິນກ່ຽວເຂົ້າ ຟາດເຂົ້າຊ່ອຍ ຈົນເອົາເຂົ້າຂື້ນເລົ້າແລ້ວ ບົວແດງກໍຍັງວ່າຄໍາເກົ່າ

- ບໍ່ອ້າຍທິດ ຂ້ອຍຂໍນໍາ ຂ້ອຍຂໍຖ້າອ້າຍເຖິງ !

ຝາປະຕູຫ້ອງສ້ວມບົວແດງ ກໍຍັງບໍ່ມີຄືເກົ່າ ແຮ່ງບົວແດງ ກັບແມ່ ດຽວນີ້ມີແຕ່ຄວາມ

ຂັດໃຈກັນ

- ມຶງກະຖ້າບັກເຂົ້າຊີວິດເຖິງ ມຶງມາເຮັດໃຫ້ລະແມ້ປັກຕູສ້ວມ ເອົາໄວ້ເປັນຫ້ອງສູ່ສູ່ກັນ

ສາ ! ແມ່ເວົ້າແດກດັນໃສ່ ເມື່ອບົວແດງປຶກສາ ຢາກເຮັດຝາປະຕູຫ້ອງ. ແມ່ຍ່ອມບໍ່ພໍໃຈ ທີ່ລູກ ສາວດື້ຄວາມ
ສຸດແຕ່ແມ່ປ້າໃຫຍ່ ມາລົມມາອອດ ເອົາມັກເອົາໃຈ ບົວແດງກໍບໍ່ຍອມ ເປັນໄພ້ ເພິ່ນ !

- ບັກທິດມາກນ່ະ ມັນອາສາເຫມິດມຶງຮູ້ບໍ່ ວ່າແຕ່ຕອບຕົກລົງ ຊິເອົາມັນມື້ໃດ໋ ມັນຊິຕໍ່

ເຊັ່ງທາງຫນ້າ ຂັ້ນສ້ວມດອງ ຢ່າວ່າແຕ່ປັກຕູ ດ້ານຝາແມ້ ອັນນີ້ລະເອົາແຕ່ຮູໂຕ ພີ່ນ້ອງໃກ້ກັນ ປານນີ້ ມຶງຊິເຮັດໃຫ້ ເຂົາຊ
ັງກູອອມບ້ານບໍ ?

ແມ່ຂູ່ເຂັ້ນຂ້ຽວຂອດບົວແດງ ຮ້າຍເຊົ້າດ່າແລງ ແກ້ມຄໍາເຂົ້າ ມີແຕ່ຄວາມເສົ້າ ຄວາມ

ເຄັ່ມ ໃສ່ຍ້ອນລູກສາວ ບໍ່ຍອມເອົາຜົວ.

ແມ່ມີແຕ່ອ້າງວ່າ ຖ້າບົວແດງ ບໍ່ເອົາທິດມາກ ພີ່ນ້ອງຈະຊັງຫມົດບ້ານ ແຕ່ແມ່ບໍ່ຫຼຽວ

ແລ ເບິ່ງເພດເຈົ້າຂອງແດ່ ວ່າທຸກວັນນີ້ ໄຫບ້ານເບິ່ງແມ່ ຄືເບິ່ງໄຫອື່ນ ໄຫໄກໄປແລ້ວ !

ຄືນນັ້ນ ແມ່ຄຽດຝຶດຄຽດຟາດ ໃຫ້ລູກສາວ ແລ້ວກໍເລີຍພາໂລ ຫນີໄປງົ້ນເຮືອນດີ ພໍ່

ຕູ້ສາ ທ້າຍບ້ານພຸ້ນ ເພາະວ່າ ຜົວເພິ່ນກໍໄປທາງ ບໍ່ຊຶ່ງຊີຕ່າວ.

ບົວແດງຂົດໂຕເຂົ້າໃນຜ້າຝາຜົນຫນາ ລົມຫນາວ ພັດເຂົ້າປະຕູຫວູດ

ໆ ຈົນໄດ້ຫມົ້ນ ເຂົ້າບັງໃນຜ້າຫົ່ມ

- ເປັນຕາຍຮ້າຍດີ ກໍຂໍຖ້າອ້າຍເຖິງກ່ອນເທາະ ມື້ຫນ້າຊິລົມອ້າຍທົດ

ດີ ໆ ໃຫ້ລາວເຊົາຫ່ວງເຊົາໃຍ " ບົວແດງບອກໂຕເອງ ແລ້ວກໍຫມ້ອຍຫຼັບ

ທ່າມກາງຄວາມຫນາວ ເປັນຂອງຣາຕຣີທີ່ມືດມິດ ໃນເດືອນຍີ່ແຮມ....

ຊວດຮູ້ເມື່ອ ຍິນສຽງຝົນລົງພໍຣໍາ ໆ ຝົນເດືອນຍີ່ ຄັນບໍ່ໄດ້ຜ້າຟາຫນາອຸ່ນປານນີ້ ກໍຄົງ

ສັ່ນຫນາວຕາຍແລ້ວ ພໍມືນຕາ ກໍຄືມີຫຍັງຜິດປົກກະຕິເກີດຂື້ນໃນຫ້ອງນ້ອຍ ຜາກົດເງົາດໍາມືດ

ມືນທືນກົ້ມມາໃສ່ ຄາງກະໃຕບົວແດງແຂງ ບົວແດງມືນ ຕາອອກກວ້າງ ເບິ່ງໃຫ້ຄັກ

ແລ້ວກໍແຂງ ຈົນຮ້ອງບໍ່ອອກ ເງົານັ້ນຢູ່ໃກ້ ໆ .... ຜີຫຼອກ !!!!

ບົວແດງຢ້ານ ແລະຂມ່າເກີນກວ່າຈະຮ້ອງເປັນສຽງອອກມາໄດ້

ນາງນອນໂຕແຂງ ເງົານັ້ນຫຼຸບນັ່ງລົງເຕັງ.... ມັນແມ່ນຄົນ !

ຊ້າເກີນໄປ....ບົວແດງຍັງຮ້ອງບໍ່ທັນອອກ ຮ່າງໃຫຍ່ບຶກບຶນນັ້ນ ເຕັງຄຶງບົວແດງໄວ້

ມືມັນອັດປາກ ກອດປັ້ມທັງຜ້າຫົ່ມ.... ບົວແດງຝືດຈົນແຮງຫຼ່ອຍ.... ໃນຄວາມມືດ ທ່າມກາງ

ສຽງຝົນຮໍາພໍຊ່າ ໆ ບົວແດງດີ້ນຣົນ ຕໍ່ສູ້ເທົ່າທີ່ແຮງຍິງຈະມີໃຫ້ ແຕ່ຮ່າງຍັກ ທັງຜ້າຟາກາຍເປັນ

ພັນທະນາການກົດຂວງ ການຕໍ່ສູ້ ເພື່ອອິ ສຣະພາບນັ້ນ....

ແລ້ວບົວແດງ ກໍສູນເສັຽມັນ.... ອິສຣະພາບ ຊຶ່ງຫມາຍເຖິງ ຄວາມ

ສາວ ອັນນາງຫວງແຫນໄວ້ ຖ້າອ້າຍເຖິງຜູ້ດຽວ !!!!

- ຢ່າປາກໄປໃສແດງ " ສຽງມັນຊື່ມບອກ ໃນຂນະທີ່ບົວແດງ ຍັງຕື່ນສເດີດຂວັນຫນີ

ສະຕິບໍ່ເຕັມ ຄືນມາເນື້ອຄີງ .... ສຽງນັ້ນ ! ອະນິດຈາ ບົວແດງເກືອບຮ້ອງອອກໄປວ່າ " ພໍ່ " ... ແຕ່ທັນຄຶດຄຳແທນໄດ້.

- ເຈົ້າ .... ເຈົ້າມາຊື່ວຄືຫມາແທ້ ມາຂົ່ມເຫັງເອົາ !

ບົວແດງບໍ່ເສັຽນ້ຳຕາພໍປີດ ມັນແຄ້ນ ເກີນທີ່ນາງຈະເວົ້າອອກເປັນຄຳຄືນໄດ້ !

- ຮື່ມ ຢ່າປາກດີຫຼາຍ ! ພໍ່ນ້າໃຈຕ່ຳ ເບິ່ງຊີງບໍ່ຢ້ານເກງ ວ່າສິ່ງທີ່ມັນເຮັດລົງຈະເປັນພັຍ

ເລີຍ ບົວແດງຫາກໍ່ຈະຄຶດພໍ້ແມ່ບໍ່ຢູ່ ແມ່ຄົງບໍ່ທັນມາ ນາຍສຸພັນ ນັກຜານຜູ່ຍິງ ຈື່ງມາສອຍໂອ ກາດ ໂທ້ ! ໄປສັ່ງທາງວ່າຈະບໍ່ມາ ແຕາແລ້ວ ກລັກມາກີນປານ້ອຍຂອງແມ່ ! ອະນິຈາ ! ແມ່ນຈະ ຮ້ອງອອກໄປ ໃຫ້ຄົນມາຊ່ອຍ ກໍມີແຕ່ ຈະຂາຍຫນ້າ ໂຕເອງທໍ່ນັ້ນ.

- ບົວແດງ ມືງຮູ້ບໍ່ວ່າ ແມ່ມືງເປັນໃຈ ໃຫ້ມືງເອົາທິດມາກພໍແຮງແລ້ວ ຖ້າເຊື່ອຄວາມ

ກູດີ ໆ ກູອາດຊ່ອຍໃຫ້ມືງ ຫຼຸດມືຈາກບັກມາກໄດ້ ຖ້າເອົາບັກເຖີງຂອງມືງ "

ນາຍສຸພັນ ສເນີຄວາມຄຶດໃຫມ່ ເພື່ອຈະໃຫ້ແຜນການຂອງມັນດຳເນີນສດວກຕໍ່ໄປ.

ບົວແດງຂົນຄີງລຸກ....ບໍ່....ນາງມີຄວາມມົວຫມອງແລ້ວປານນີ້ ຍັງຊິມີຫນ້າ ໄປຫຼອກ

ລວງອ້າຍເຖີງ ຜູ່ປະເສີດເລີດຄົນປູ່ຫວ໊ະ ຕາຍຊະດີກວ່າ....

ບົວແດງບໍ່ປາກ ນາຍສຸພັນກໄດ້ທາງ ມີປຽບ ສເນີແນວໃຫມ່ລອງເບິ່ງ.

- ກູເຫັນໃດ໋ ມື້ມືງອອກໄປພໍ້ບັກເຖີງຢູ່ສວນຖົ່ວ ຫຼືມືງຢາກໃຫ້ມັນຕາຍໄວ ກູບອກທະ

ຫານ ໄປຈັບມັນຍາມໃດກະໄດ້ ! "ທໍ່ນັ້ນບົວແດງກະຮ້ອງກ໊າກຢ່າງຕົກໃຈ

- ໂອ ບໍ່... ບໍ່... ອ້າຍເຖີງ... ເຈົ້າຢ່າເຮັດຈັ່ງຊັ້ນ..." ສຽງບົວແດງອ້ອນວອນ ຢ່າງຍອມ

ແລ້ວ ທຸກສິ່ງຢ່າງ... ເພື່ອອ້າຍເຖີງຄືນດຽວ !

ຍອມພໍ່ນ້ຳ ຍອມຕົກເປັນນາງທາສ ສນອງຄວາມຕ້ອງການຂອງມັນ.

ຍອມ ເພາະປາກຢູ່ໄປໂດຍບໍ່ຍອມເຂົ້າພາຂວັນກັບອ້າຍທິດມາກ !

ແລະຍອມເພາະບໍ່ປາກໃຫ້ອ້າຍເຖິງຖືກຈັບ....

ຍອມ.... ບົວແດງຍອມທຸກຢ່າງ ....!

ມີຫຍັງອີກແດ່ໃນໂລກ ທີ່ລູກຜູ່ຍິງ ຜູ່ຮັກດຽວໃຈດຽວ ຄືບົວແດງຈະເສັ່ງດາຍທໍ່ສິ່ງທີ່ມັນສູນເສັ່ງໄປ ໃນເທື່ອນີ້ ? ໂດຍຈຳເພາະແລ້ວ ເສັ່ງໃຫ້ແກ່ຊາຍຜູ່ສມັກເປັນຜົວຂອງແມ່.... ເສັ່ງໄປ ດ້ວຍການ ກົດຂີ່ຂົ່ມເຫັງເອົາແທ້ ໆ.

ແຕ່ບົວແດງ ກໍຕົກຢູ່ໃນສະພາບນ້ຳຖ້ົມປາກ ເຮັດແນວໃດ ນາງກໍຕ້ອງຖ້າ ໃຫ້ໄດ້ລົມຕໍ່ປາກ ກັບບ່າວເຖິງກ່ອນ ວ່າຈະແກ້ໄຂເຫດການແນວໃດ ເຖິງແມ່ນ ອ້າຍເຖິງຈະຜາງຫນ່າຍບົວແດງວ່າມີຣາຄີຄາວແລ້ວ ບົວແດງກໍບໍ່ປະສົງ ຈະທວງສັນຍາແນວໃດ ຈະຂໍຫຼີກທາງໃຫ້ລາວຢ່າງທີ່ຕົນເປັນຝ່າຍມີເຄາະກັມຫຼາຍກວ່າ....

ບົວແດງຕ້ອງຖ້າລົມກັບບ່າວເຖິງ....

ແຕ່ໃນຂນະທີ່ຖ້າຢູ່ນີ້ ນາຍສຸພັນ ກໍມີວິທີຍົວະກິນຕັບບົວແດງ ຕາມອຳເພີໃຈ ມັນມີຜຍາມາຍົວະ ໃຫ້ບົວແດງຢ້ານ... ບ່າວເຖິງໄດ້ຮັບອັນ ຕຣາຍ ເຖິງແກ່ຊີວິດ.

ແມ່ນຈັ່ງໃດ໋ ບົວແດງກໍສູນສິ້ນທຸກຢ່າງ ອັນຈັກເປັນຄວາມພາກພູມໃຈແລ້ວ ຂໍຢ່າໃຫ້ບ່າວເຖິງຕ້ອງສູນເສັ່ງຫຍັງອີກເທາະ ! ບົວແດງ ຕົກເປັນຝ່າຍສົມຍອມພໍ່ນ້ຳໃນທຸກໂອກາດ

ທີ່ມັນຫາທາງມາຂົ່ມເຫັງເອົານຳນາງ !

ໃນແລງອັນຮ້ອນເອົ້າແລງນຶ່ງ ຂອງຕົ້ນເດືອນຫ້າຕໍ່ມາ ທິດມາກຊຶ່ງ ທຽວມາວອນມາຫນ່ຽວບົວແດງ ຢູ່ເປັນປະຈຳ ພໍກ້າວຂ້າມານີ້ມຂັ້ນໄດເຮືອນຂຶ້ນມາ ກໍຕົກອົກ ຕົກໃຈຈົນຕາຕື່ຕໍ່ສະພາບຂອງບົວແດງ ຊຶ່ງແມ່ມັດສອກຂັດຫຼັງ ນັ່ງຂົດຄູ້ຢູ່ຫນ້າຫ້ອງນ້ອຍ ພ້ອມທັງໄມ້ຄານໃນມືລາວກໍຫວດລົງສຸດແຮງແຄ້ນ.... ທັງດ່າທັງປ້ອຍ ບໍ່ມີຄຳໃດ ຈະເອົາມາ ປຽບໄດ້.

- ອີ່ລູກບໍ່ມັກດີ ອີ່... ມຶງມຶງໃຫ້ບັກໃດເຊີງຈົນມີລູກຫື ? ບອກມາແມ້ ຫຼືວ່າບັກເຖິງມັນດອດມາຫຼອນ ?

ທຳອິດ ຕໍ່ຄວາມຮູ້ອັນໃຫມ່ ທີ່ວ່າບົວແດງມານທາງ ທິດມາກກໍແຄ້ນຂຶ້ນມາ ຈົນປາກລົງເຮືອນຫນີໄປ.... ຍິງຊາດຊົ່ວ ຍັງບໍ່ມັກດີ ວອນຂໍແຕ່ງງານເອົາດີ ໆ ບໍ່ມັກ .... ໃຫ້ເຂົາເຮັດມານທາງ !

ແຕ່ປະໂຍກຂອງບົວແດງທີ່ເອີ່ຍເອື້ອນຖຽງແມ່ອອກມານັ້ນ :

- ບໍ່ແມ່ ເຈົ້າຢ່າປ້າຍສີໃສ່ອ້າຍເຖິງ ລາວປະເສີດເລີດຄົນ ບໍ່ແມ່ນລາວ ອີ່ແມ່ ບໍ່ແມ່ນລາວ...."

- ບໍ່ແມ່ນມັນ ຊິແມ່ນໃຜຊັ້ນ ມຶງບອກມາ ບັກຫນ້າຫມາໃດ໋ ?

- ມັນຄົນຊົ່ວອີ່ແມ່ ມັນຊົ່ວຈົນບໍ່ຍອມ ຮັບຮູ້ລູກຂອງມັນດອກ. ຢ່າໃຫ້ຂ້ອຍອອກຊື່ມັນເລີຍ." ບົວແດງສະອື້ນໄຫ້

ທິດມາກ ເຂົ້າໄປດຶງໄມ້ຄານອອກຈາກມືສາວໄຂ.

- ປະກ່ອນນ້າສາວ ເວົ້າກັນດີ ໆ " ລາວເວົ້າທີ່ນັ້ນແລ້ວ ກໄປແກ້ເຊືອກໃຫ້ນ້ອງ ຈູງມາ ນັ່ງນອກຊານ ໃຫ້ລົມເບີຍ.

ສອງບ່າວສາວລົມກັນຢູ່ເດີກ ສາວໄຂພໃຈທີ່ທິດມາກ ທຳທ່າຈະເຂົ້າໃຈກັບລູກສາວໂຕ ຟ້າວຫຼີກທາງໃຫ້ເຂົາລົມກັນ - ຜູ່ຊາຍລາງຄົນ ກໍມັກ ຈົນຍອມກິນຂອງ ເຫຼືອເຂົາ ຢູ່ດອກ - ນາງຄຶດແລະພາວະນາ ຂໃຫ້ທິດມາກ ຮັບເອົາບົວແດງ ທັງທີ່ມານທາງນີ້ທ້ອນ. ຈະບໍ່ຕ້ອງໄດ້ອາຍບ້ານເມືອງເພິ່ນຫຼາຍ. ເອົາກັນໄດ້ຫົກເດືອນອອກລູກ ກໍຍັງດີ ກ່ອນ ຈະຕ້ອງ ອອກ ໂດຍບໍ່ທັນມີຜົວ !

ທິດມາກອອຍເອົາຄວາມເວົ້າບົວແດງຢູ່ດົນ ຢາກໃຫ້ບອກ ແຕ່ບົວແດງກໄດ້ແຕ່ວ່າ :

-ຂ້ອຍບອກບໍ່ໄດ້ ອ້າຍທິດ ຂ້ອຍບອກອອກໄປຄຳດຽວ ອ້າຍເຖິງຊິ ຖືກຈັບໂລດ ຂ້ອຍຂໍຍອມອາຍ ຍອມຫມົດທຸກແນວ ເພື່ອບໍ່ໃຫ້ລາວຖືກ ຈັບກໍພໍ.

- ຄັນຊັ້ນ ແດງກະຕ້ອງເຂົ້າພາຂວັນນຳອ້າຍແຫຼະ ພໍບໍ່ໃຫ້ອາຍໄທບ້ານ ອ້າຍບໍ່ວ່າດອກ ໃນເມື່ອວ່າ ໂຕກະຖືກເຂົາກຸມເອົາ ບໍ່ແມ່ນໂຕສມັກໃຈເອງ ແມ່ນບໍ່ ?

ບົວແດງ ກົ້ມຂາບຜູ່ເປັນອ້າຍດ້ວຍຄວາມຮູ້ສຶກຕື້ນຕັນໃຈ.

- ອ້າຍທິດມາກ ມີບຸນຄຸນຕໍ່ຂ້ອຍ ຫຼາຍແທ້ ໆ ເຈົ້າຊິຊ່ອຍຂ້ອຍ ຈົນໃຫ້ຄົນ ນິນທາເຈົ້າ ຊັ້ນຫວ໊ະ ? ໃຈຂ້ອຍແທ້ ຂ້ອຍຢາກຖ້າອ້າຍເຖິງກ່ອນ ລາວວ່າຈັ່ງໃດ ລະຈັ່ງຊິວ່າ....

ທິດມາກໄດ້ແຕ່ສະອື້ນໃນອົກ... ເບິ່ງດູໃຈບົວແດງ ! ຂນາດມີລູກ ມານທາງ ກໍຍັງບໍ່ຢາກຍອມ... ຕ້ອງຖ້າເອົາຄຳເວົ້າຊາຍຊູ້ຜູ່ຮັກຝັງໃຈ ເສັຽ ກ່ອນ....!

ເຊົ້າມື້ຕໍ່ມາ ເຫດການທີ່ບໍ່ມີໃຜເດົາອອກກໍເກີດຂຶ້ນ !

ຮ່າງຂອງບົວແດງ ຫ້ອຍຕ່ອນແຕ້ນຢູ່ງ່າຂາມງອຍ ຂ້າງຜີປ່າຊ້າ. ອີ່ສາວ

ໃຈເດັດ ເອົາຜ້າແພຂິດຍາວຜູກຄໍໂຕເອງ ລາໂລກຕອນຂ້ອນແຈ້ງ ! ໄທບ້ານ ຜູ່ນຶ່ງໄປຫັນກ ແຕ່ເດິກເລີຍໄປພໍ້ - ແລ້ວຄວາມກໍຊ່າກັນ ປານດິນຊິຫຼົ່ມ ! ໃຜ ໆ ກໍຄຶງບໍ່ງຶດງໍ້ ອັສຈັນ ພິລຶກພິລໍ້າ ເມື່ອຮູ້ວ່າ ບົວແດງມັນແຂວນຄໍໂຕເອງ ຍ້ອນມີລູກມານທາງ - ສາວຜູ່ດີ ມາເສັງຊື່ ! ມັນຄຶງບໍ່ກ້າຊິຢູ່ສູ້ໜ້າ ໃຫ້ໄທບ້ານ ~~ໄທເມືອງເພີ່ນ~~ຮຸ່ມຮໍ !

ສາວໄຂ ງຶດງໍ້ ອັສຈັນໃຈລູກສາວ.... ເບິ່ງດູ້ ຂນາດທິດມາກ ມາດີນໍາ ຊິເອົາ

ທັງມານ ມັນກໍຍັງບໍ່ຍອມ....

ຕໍ່ມາບໍ່ດົນ ບ່າວເຖິງເລີຍກັບມາບ້ານໄດ້ ພາຍຫຼັງທີ່ທາງການ ໄດ້ຈັບກຸມເອົາ ໂຕນາຍສຸ

ພັນ ຄົນສະພັດສະພອຍ ຊຶ່ງເປັນຫນອນບ່ອນໃສ້ ໃຫ້ພໍ່ບ້ານເກົ່າຖືກຂ້າ - ແມ່ນວ່າ ບ່າວເຖິງ ຈະບໍ່ຮູ້ຕື້ນເລິກຫນາບາງນໍາການຕາຍຂອງສາວຊູ້ ນອກຈາກເຂົ້າໃຈວ່າ ບົວແດງເສັງໃຈທີ່ ຖືກ ພໍ່ນ້າຄົນຊ ່ວຂິ່ມເຫັງເອົາຈົນມານ ທໍ່ນັ້ນ.... ແຕ່ທິດມາກເປັນຜູ່ ເສັງອີກເສັງໃຈ ຫຼາຍ ລາວຜູກພັນ ຢູ່ກັບກົກຂາມງອຍນີ້ ຢ່າງປລາດ... ລາວຫວງມັນ ລາວແຍງມັນ ບໍ່ຍອມໃຫ້ໃຜມາຟັນ ມາປັ້ມໄດ້.... ມື້ບົວແດງຕາຍ ແມ່ນ ລາວເອງ ທັນແລ່ນມາກ່ອນຫມູ່ ມາໂຊ ມເອົາຮ່າງໄຮ້ວິນຍານ ຂອງບົວແດງ ... ແກ້ຜ້າຜູກຄໍ ອອກ ດ້ວຍມືລາວເອງ.... ລາວມັກເລົ່າເຣື່ອງ ພິສດານ ໃຫ້ຄົນຟັງເລື້ອຍ ໆ ວ່າ ລາວພໍ້ ບົວແດງຢູ່ງ່າຂາມງອຍນັ້ນ... ບົວແດງຍໍມື ນົບ ແລະເວົ້າວ່າ... ອ້າຍທິດ ເຈົ້າມີບຸນຄຸນ ຕໍ່ຂ້ອຍຫຼາຍ....

ທິດມາກ ຄືຊິຮູ້ດີຕື້ວ່າ ....ລາວມີບຸນຄຸນ ຕໍ່ບົວແດງຈັ່ງໃດ໋ ?

ຂອງວ່າ....

24/VII

ຄືນນັ້ນ ທິດມາກນອນບໍ່ຫຼັບ ບໍ່ປາກເຫັນສາວຜູ້ລາວມັກ ຕ້ອງຖືກ ແມ່ຕົບຕີ ຮ້າຍດ່າຕໍ່ໄປດົນ ລາວຈຶ່ງໂງໄປຫາບົວແດງອີກ ໃນຕອນທ່ຽງຄືນ ເອີ້ນປຸກຄ່ອຍ ໆ ຢູ່ກ້ອງລ່າງ ແລ້ວບົວແດງກໍລຸກອອກມານັ່ງ ງອຍຊານລົມນໍາ.

- ອ້າຍມາຂ່າວບົວແດງ ຢ່າຕົກໃຈຫຼາຍເດີ້ ! ທິດມາກເວົ້າ ສຽງສັ່ນຟ້າວ

- ຂ່າວອ້າຍເຖິງ - ອ້າຍທິດ ? ບົວແດງຊື່ມສຽງຕື່ນເຕັ້ນ

- ເອີ້ - ມັນ .... ມັນຖືກຂ້າ.... ບົວແດງ.... ເຂົາມາເອົາມັນໄປ ຕໍ່ ໜ້າຕໍ່ຕາອ້າຍ.... ອ້າຍ.... ປາກບອກມັນວ່າ.... ບົວແດງປາກພໍ້ມັນ....

ບົວແດງ ມິດຈັ່ງງັ່ງ ໄປຄາວນຶ່ງ ໃນຄວາມມືດ ຂອງຄືນອອກໃຫມ່ ອ່ອນ ໆ ນັ້ນ ທິດມາກໄດ້ຍິນແຕ່ ຄໍາເວົ້າສັ້ນ ໆ ຂອງບົວແດງວ່າ :

- ໄດ້ແລ້ວ - ອ້າຍທິດ ໄປນອນສາ ມື້ອື່ນພໍ້ກັນໃຫມ່ !

ooooooooooooooooooooooooooooooooooo

ບໍ່ມີມື້ອື່ນ ສໍາລັບບົວແດງ ຄໍາວ່າບ່າວເຖິງຖືກຂ້າ ພຽງພໍແລ້ວ ສໍາຣັບ ການຕັ່ດສິນໃຈໃນເທື່ອນີ້....

ທິດມາກ ກາຍເປັນຄົນບ້າ ໆ ບໍ ໆ ຂີ້ເຫຼົ້າເມົາຢາ ເປັນໂຕຕລົກ ປະຈໍາ ບ້ານໂພນຂາມງອຍ ຕໍ່ມາເທົ້າທຸກວັນນີ້ ແລະ ມັກຈະເລົ່າເຣື່ອງທີ່ເກີດຂຶ້ນ ໃຫ້ຄົນຟັງຊໍ້າຊາກ ທັງອ້າງອີງວ່າ ແຕ່ແມ່ນເດືອນຫ້າ ປີການນີ້ທີ່ບົວແດງ ຕາຍ... ດັ່ງບັນຍາຍມານີ້ແລ້ວ .